ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ 1109---

ຫ້ອງການ ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 17 ມີນາ 2026

# ແຈ້ງການ

**ເຖິງ: ບັນດາ ຫ້ອງການ, ກົມ, ສູນ-ສະຖາບັນ, ພາກສ່ວນທຽບເທົ່າກົມ ແລະລັດວິສາຫະກິດ ພາຍໃນກະຊວງສຶກສາທິການ ແລະກິລາ ແລະມະຫາວິທະຍາໄລແຫ່ງຊາດ.**

**ເລື່ອງ: ການເພີ່ມທະວີແກ້ໄຂບັນຫາ ຜົນກະທົບຈາກລາຄານ້ຳມັນເຊື້ອໄຟ.**

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4883/ສສກ, ລົງວັນທີ 23 ກັນຍາ 2022;
- ອີງຕາມ ຄຳສັ່ງວ່າດ້ວຍການເພີ່ມທະວີແກ້ໄຂບັນຫາຜົນກະທົບຈາກລາຄານ້ຳມັນເຊື້ອໄຟ ຂອງນາຍົກລັດຖະມົນຕີ ສະບັບເລກທີ 40/ນຍ, ລົງວັນທີ 13 ມີນາ 2026;
- ອີງຕາມ ທິດຊີ້ນຳຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຄັ້ງວັນທີ 16 ມີນາ 2026.

ເພື່ອເປັນການຜັນຂະຫຍາຍ ທິດຊີ້ນຳຂອງຂັ້ນເທິງ, ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທຸກພາກສ່ວນ ຊາບວ່າ: ໃນໄລຍະທີ່ສະພາບການສາກົນມີຄວາມເຄັ່ງຮ້ອນ ໂດຍສະເພາະແມ່ນໃນພາກພື້ນຕາເວັນອອກກາງ ຊຶ່ງໄດ້ສົ່ງຜົນກະທົບໂດຍກົງ ຕໍ່ຕ່ອງໂສ້ການສະໜອງນ້ຳມັນເຊື້ອໄຟ ລວມໄປເຖິງຕໍ່ເສດຖະກິດພາກພື້ນ, ສາກົນ ແລະ ສປປ ລາວ ພວກເຮົາ ຢ່າງຫລີກລ່ຽງບໍ່ໄດ້ ໂດຍສະເພາະລາຄານ້ຳມັນເຊື້ອໄຟ ທີ່ເພີ່ມສູງຂຶ້ນ ແລະ ອາດຈະຂາດແຄນໃນບາງໄລຍະ. ສະນັ້ນ, ເພື່ອເຮັດໃຫ້ການແກ້ໄຂບັນຫາແທດເໝາະກັບສະພາບຕົວຈິງ ແລະ ທັນການ, ມີປະສິດທິພາບ ແລະ ປະສິດທິຜົນ ທັງເປັນພື້ນຖານໃຫ້ແກ່ທຸກພາກສ່ວນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ຈຶ່ງໃຫ້ທຸກພາກສ່ວນ ເພີ່ມທະວີຄວາມເປັນເຈົ້າການ ໃນການຈັດຕັ້ງປະຕິບັດບັນດາມາດຕະການສຸກເສີນ ແລະ ສະເພາະໜ້າ ຂອງລັດຖະບານທີ່ວາງອອກ ຄື:

1. ໃຫ້ທຸກພາກສ່ວນ ເພີ່ມທະວີການດຳເນີນມາດຕະການປະຢັດ, ຫຼຸດຜ່ອນການຈັດກອງປະຊຸມ ທີ່ໄດ້ເດີນທາງໄປທ້ອງຖິ່ນ, ຫັນມາປະຊຸມແບບທາງໄກຫຼາຍຂຶ້ນ; ໃຫ້ສັບປ່ຽນໝູນວຽນກັນມາປະຈຳການ ສຳລັບພະນັກງານທົ່ວໄປ ຕາມເງື່ອນໄຂຕົວຈິງ ເພື່ອຫລຸດຜ່ອນພາລະການໃຊ້ນ້ຳມັນຂອງພະນັກງານ-ລັດຖະກອນ ໂດຍກຳນົດໜ້າວຽກໃຫ້ຊັດເຈນ ພ້ອມທັງກຳນົດຕົວຊີ້ວັດຕໍ່ຜົນສຳເລັດຂອງການເຮັດວຽກທາງໄກ, ພ້ອມທັງຕິດຕາມກວດກາ ແລະ ປະເມີນຜົນ ຢ່າງເປັນປົກກະຕິ.

2. ສ້າງຈິດສຳນຶກໃຫ້ພະນັກງານ-ລັດຖະກອນ ມີການປະຢັດການນຳໃຊ້ນ້ຳມັນເຊື້ອໄຟ ໂດຍຫັນມານຳໃຊ້ພາຫະນະຂົນສົ່ງສາທາລະນະ ໂດຍສະເພາະແມ່ນການນຳໃຊ້ ໂຄງການລົດຂົນສົ່ງ BRT ໃຫ້ຫຼາຍຂຶ້ນກວ່າເກົ່າ.

3. ເອົາໃຈໃສ່ຕິດຕາມຂ່າວສານຈາກແຫຼ່ງທີ່ໜ້າເຊື່ອຖື, ມີການພິຈາລະນາກັ່ນກອງຕໍ່ແຫຼ່ງຂ່າວສານ ແລະ ເນື້ອໃນໃຫ້ຖືກຕ້ອງ, ສະກັດກັ້ນ ແລະແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆ, ຫຼີກເວັ້ນການສົ່ງຕໍ່ຂໍ້ມູນທີ່ບໍ່ຮູ້ແຫຼ່ງທີ່ມາ ຊຶ່ງຈະສ້າງຄວາມວຸ້ນວາຍສັບສົນ ໃຫ້ແກ່ສັງຄົມ.

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງທຸກພາກສ່ວນ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງການ

ຮສ. ປອ. ທອງວັນ ວິງຄໍາສາຍ

ປ່ອນສົ່ງ:

- ລັດຖະມົນຕີ, ຮອງລັດຖະມົນຕີ ທ່ານລະ 01 ສະບັບ.
- ເກັບສໍາເນົາ 01 ສະບັບ.